ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 1034/ທຫລ

ນະຄອນຫລວງວຽງຈັນ, ວັນທີ 22/11/2011

## ຂໍ້ຕົກລົງ
## ວ່າດ້ວຍຄ່າທຳນຽມການຂໍສ້າງຕັ້ງ ແລະ ຄ່າຄຸ້ມຄອງປະຈຳປີ
## ຂອງທະນາຄານທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບຄ່າທຳນຽມການຂໍສ້າງຕັ້ງ, ຄ່າຄຸ້ມຄອງປະຈຳປີ ແລະ ການຊຳລະຄ່າທຳນຽມ ແລະ ຄ່າຄຸ້ມຄອງຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດທີ່ດຳເນີນການຂໍສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ໃນທົ່ວລະບົບທະນາຄານ.

**ມາດຕາ 2. ຄ່າທຳນຽມການຍື່ນຄຳຮ້ອງຂໍສ້າງຕັ້ງ**

ທະນາຄານ ແຫ່ງ ສປປ ລາວ ຈະເກັບຄ່າທຳນຽມການຍື່ນຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ການຂໍຂະຫຍາຍສາຂາທະນາຄານ ທຸລະກິດພາຍໃນ ດັ່ງນີ້:

- ທະນາຄານທຸລະກິດ (ສຳນັກງານໃຫຍ່) ຈຳນວນ 80.000.000 ກີບ
- ສາຂາທະນາຄານທຸລະກິດຕ່າງປະເທດ ຈຳນວນ 60.000.000 ກີບ
- ສາຂາທະນາຄານທຸລະກິດພາຍໃນ ຈຳນວນ 20.000.000 ກີບ

**ມາດຕາ 3. ຄ່າທຳນຽມການອອກໃບອະນຸຍາດສ້າງຕັ້ງຖາວອນ**

ພາຍຫລັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນ, ທະນາຄານ ແຫ່ງ ສປປ ລາວ ຈະເກັບຄ່າທຳນຽມຈາກທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ດັ່ງນີ້:

- ທະນາຄານທຸລະກິດ (ສຳນັກງານໃຫຍ່) ຈຳນວນ 20.000.000 ກີບ
- ສາຂາທະນາຄານທຸລະກິດຕ່າງປະເທດ ຈຳນວນ 10.000.000 ກີບ
- ສາຂາທະນາຄານທຸລະກິດພາຍໃນ ຈຳນວນ 10.000.000 ກີບ

**ມາດຕາ 4. ຄ່າຄຸ້ມຄອງປະຈຳປີ**

ທະນາຄານ ແຫ່ງ ສປປ ລາວ ເກັບຄ່າຄຸ້ມຄອງປະຈຳປີ ຈາກບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໃນອັດຕາ 0,002% ຂອງຊັບສິນທັງຫມົດ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ແຕ່ຕ່ຳສຸດບໍ່ໃຫ້ຫລຸດ 50.000.000 ກີບ.

ການຄິດໄລ່ຄ່າຄຸ້ມຄອງປະຈຳປີໃຫ້ປະຕິບັດດັ່ງນີ້:

ຊັບສິນທັງໝົດ(ລວມສະກຸນເງິນກີບ ບວກໃຫ້ເງິນຕາຕ່າງປະເທດ)ໃນມື້ປິດບັນຊີທ້າຍປີ ຄູນໃຫ້ 0,002%.

**ມາດຕາ 5. ການຊຳລະຄ່າທຳນຽມການຂໍສ້າງຕັ້ງ ແລະ ຄ່າຄຸ້ມຄອງປະຈຳປີ**

5.1 ຜູ້ຂໍສ້າງຕັ້ງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ຕ້ອງຊຳລະຄ່າທຳນຽມໃນການຂໍສ້າງຕັ້ງດັ່ງນີ້:

- ຄ່າທຳນຽມການຍື່ນຄຳຮ້ອງສະເຫນີຂໍສ້າງຕັ້ງ ຕ້ອງຊຳລະໃນເວລາຍື່ນສຳນວນຄຳຮ້ອງຕໍ່ທະນາຄານ ແຫ່ງ ສປປ ລາວ ແລະ ຄ່າທຳນຽມດັ່ງກ່າວບໍ່ສາມາດຖອນຄືນໄດ້.
- ຄ່າທຳນຽມໃບອະນຸຍາດສ້າງຕັ້ງຖາວອນ ແມ່ນຊຳລະໃນມື້ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນ.

5.2 ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດຕ້ອງຊຳລະຄ່າຄຸ້ມຄອງປະຈຳປີ ໃນໄຕມາດທີ 1 (ກ່ອນວັນທີ 01 ເມສາ) ຂອງປີການບັນຊີຖັດໄປ.

ການຊຳລະຄ່າທຳນຽມ ແລະ ຄ່າຄຸ້ມຄອງດັ່ງກ່າວ ໃຫ້ຊຳລະເຂົ້າບັນຊີຄ່າທຳນຽມສ້າງຕັ້ງ ແລະ ຄ່າຄຸ້ມຄອງປະຈຳປີ ຢູ່ ກົມບໍລິການ, ທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 6. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມບໍລິການ ທະນາຄານ ແຫ່ງ ສປປ ລາວ, ບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ສຳລັບທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດທີ່ໄດ້ຮັບອະນຸຍາດສ້າງຕັ້ງຖາວອນຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006 ນັບແຕ່ວັນທີ 16 ມັງກອນ 2007 ເປັນຕົ້ນມາ ແຕ່ຍັງບໍ່ທັນໄດ້ຊຳລະຄ່າທຳນຽມໃບອະນຸຍາດຖາວອນ ຕ້ອງຊຳລະຄ່າທຳນຽມໃບອະນຸຍາດສ້າງຕັ້ງຖາວອນຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 686/ທຫລ, ລົງວັນທີ 31 ຕຸລາ 2007. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ສົມພາວ ໄຟສິດ